ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 211 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 20 ພຶດສະພາ 2019

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ວ່າດ້ວຍ ການປະກາດໃຫ້ສັດຕະຍາບັນ ແກ່ສັນຍາການສ້າງຕັ້ງອົງການຮ່ວມມືປ່າໄມ້ອາຊີ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 14;
- ອີງຕາມ ກົດໝາຍວ່າດ້ວຍ ສົນທິສັນຍາ ແລະ ສັນຍາສາກົນ, ສະບັບເລກທີ 18/ສພຊ, ລົງວັນທີ 08 ພຶດສະພາ 2017, ມາດຕາ 44;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 09/ຄປຈ, ລົງວັນທີ 28 ມີນາ 2019.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຫ້ສັດຕະຍາບັນ ແກ່ສັນຍາການສ້າງຕັ້ງອົງການຮ່ວມມືປ່າໄມ້ອາຊີ;

ມາດຕາ 2 ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຄົາລົບ ແລະ ປະຕິບັດສັນຍາສາກົນສະບັບນີ້. ມອບໃຫ້ກະຊວງການຕ່າງປະເທດຈັດຕັ້ງປະຕິບັດຂັ້ນຕອນທາງການທູດ ຕາມກົດໝາຍ ແລະ ລະບຽບການ;

ມາດຕາ 3 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ບຸນຍັງ ວໍລະຈິດ